# ຄວາມຈິງຕໍ່ມວນຊົນ

Ottawa County Health Department

## ກາລະໂຣກ

### ກາລະໂຣກຄືຫຍັງ?

ກາລະໂຣກຄືພະຍາດຂອງສັດ ແລະຜູ້ຄົນ ເກີດຈາກແບັກແທເຣັຍ. ສ່ວນຫຼາຍຈະເກີດນໍາສັດປະເພດໜູ ແລະ ໝັດຂອງມັນ. ນ້ອຍໜັກນ້ອຍໜາ ພະຍາດນີ້ຈະເກີດຢູ່ໃນສະຫະຣັດ.

ກາລະໂຣກມີຢູ່ນໍາກັນສາມແບບໃຫຍ່ຄື: ໄຂ່ພອງຕາມຮ່າງກາຍ, ເຂົ້າທາງການຫາຍໃຈ, ແລະເຂົ້າໃນເລືອດ. ທັງສາມຢ່າງນີ້ ເກີດຈາກແບັກແທເຣັຍຊະນິດດຽວກັນ, ແຕ່ແຕກຕ່າງໃນການຕິດຕໍ່ ແລະຂຶ້ນກັບພາກສ່ວນຮ່າງກາຍທີ່ຖືກຕິດຕໍ່.

### ກາລະໂຣກແຜ່ລາມແນວໃດ?

ກາລະໂຣກອາດແຜ່ລາມໃນວິທີດັ່ງຕໍ່ໄປນີ້:

- ກາລະໂຣກທີ່ໄຂ່ພອງຕາມຮ່າງກາຍ
  - ຖືກໝັດໂຕທີ່ເປັນພະຍາດກັດ
  - ແຕະຕ້ອງສັດໂຕທີ່ເປັນພະຍາດ
- ກາລະໂຣກເຂົ້າທາງການຫາຍໃຈ
  - ຕິດຕໍ່ຈາກຄົນນຶ່ງຫາອີກຄົນນຶ່ງ ໂດຍທາງສິ່ງທີ່ອອກມາຈາກປາກຈາກດັງ (ໄອ, ຈາມ, ນໍ້າລາຍ)
  - ຕາມປົກກະຕິແລ້ວ ພະຍາດສາມາດແຜ່ລາມອອກຈາກບຸກຄົນທີ່ເປັນພະຍາດນັ້ນ ໄກເຖິງ 6 ຟີດ
- ກາລະໂຣກເຂົ້າໃນເລືອດ
  - ເກີດຂຶ້ນເມື່ອພະຍາດລາມເຂົ້າເຖິງເສັ້ນເລືອດ

ກາລະໂຣກນີ້ກໍໃຊ້ເປັນອາວຸດໄດ້ ໂດຍທາງຜູ້ກໍ່ການຮ້າຍຝ່າຍເຊື້ອໂຣກ ທີ່ປ່ອຍມັນໄປຕາມອາກາດ.

### ອາການບາງຢ່າງມີຫຍັງແດ່?

ອາການບາງຢ່າງ ແມ່ນລວມທັງ:

- ກາລະໂຣກທີ່ໄຂ່ພອງຕາມຮ່າງກາຍ
  - ໜາວເຢືອກ
  - ຄີງຮ້ອນ
  - ປວດຫົວ
  - ເຈັບຕາມກ້າມເນື້ອ
  - ອ່ອນເພັຍ
  - ຕຸ່ມໄຂ່ພອງເປັນນໍ້າໜອງສີເຫລືອງ
- ກາລະໂຣກເຂົ້າທາງການຫາຍໃຈ
  - ອ່ອນເພັຍ
  - ໄອ
  - ຄີງຮ້ອນ
  - ຫາຍໃຈບໍ່ອີ່ມທ້ອງ
- ກາລະໂຣກເຂົ້າໃນເລືອດ
  - ປ່ວຍໜັກແບບທົ່ວໄປ

ຖ້າເມີນເສີຍຈາກກາລະໂຣກທີ່ໄຂ່ພອງຕາມຮ່າງກາຍ ຫລືເຂົ້າທາງການຫາຍໃຈ, ແລ້ວແບັກແທເຣັຍນັ້ນອາດແຜ່ລາມເຂົ້າເຖິງເສັ້ນເລືອດ ແລະຈະກາຍເປັນກາລະໂຣກເຂົ້າໃນເລືອດ.

### ຈະກວດພົບກາລະໂຣກໄດ້ແນວໃດ?

ຈະກວດພົບກາລະໂຣກໄດ້ທາງການກວດນໍ້າລາຍ, ເລືອດ, ນໍ້າຈາກກະດູກສັນຫລັງ, ຫລືຈາກຕຸ່ມ.

### ຈະຮັກສາກາລະໂຣກດ້ວຍວິທີໃດ?

ຄວນສັກຢາຂ້າພະຍາດພາຍໃນ 24 ຊົ່ວໂມງ. ການເປັນພະຍາດກາລະໂຣກນີ້ ອາດເຖິງແກ່ຄວາມຕາຍໄດ້ ຖ້າບໍ່ປິ່ນປົວທັນເວລາ.

### ສໍາລັບລາຍລະອຽດເພີ່ມເຕີມກ່ຽວກັບກາລະໂຣກໃຫ້ຕິດຕໍ່ໄປທີ່:

Ottawa County Health Department
www.miOttawa.org

Center for Disease Control and Prevention
www.bt.cdc.gov/agent/plague/
ເລກໂທຣະສັບ: (888) 246-2675

12251 James St., Suite 400
Holland, MI 49424

ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643

ແວບໄຊ: www.miOttawa.org